ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານໂພນພະເນົາ ວຽງຈັນ, ສ.ປ.ປ.ລາວ ຕູ້ປນ 6821, ໂທຣ: (865-21) 451222,451116 ແຟັກ: 451117

PHONPHANAO VILLAGE,VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222,451116 FAX:451117

E-mail:Lcc@laocement.com,www.laocement.com

ເລກທີ 181 /ບຊລ

ນະຄອນຫລວງວຽງຈັນ, ວັນທີ 08 ມິ.ຖ 2020

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019

ບໍລິສັດ ຊີມັງລາວ ມະຫາຊົນ (ບຊລ)

ປະຊຸມເມື່ອວັນທີ 30/06/2020 ເວລາ 14:00 ໂມງ ທີ່ຫ້ອງປະຊຸມຊັ້ນ 08 ອາຄານຕະຫຼາດຫຼັກຊັບ ລາວຜ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ, ເປັນປະທານກອງປະຊຸມໂດຍທ່ານ ຈ່າງລີ້ ຜູ້ອຳນວຍການ ບຊລ ຊຶ່ງມີຜູ້ເຂົ້າຮ່ວມກອງປະຊຸມທັງໝົດ 26 ທ່ານ, ໃນນີ້ມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມ 21 ທ່ານ ແລະມອບສັນທະ 05 ທ່ານ, ມີຮຸ້ນລວມກັນທັງໝົດ 35,595,200 ຮຸ້ນ ເທົ່າກັບ 89 ສ່ວນຮ້ອຍຂອງ ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະກົດລະບຽບຂອງບໍລິສັດ.

I. ປະທານກອງປະຊຸມໄດ້ກ່າວຕ້ອນຮັບແຂກ ແລະແນະນຳຜູ່ທີ່ເຂົ້າຮ່ວມປະຊຸມ ດັ່ງນີ້ :

- <u>ຜູ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຢູ່ເມືອງຄຸນມິງ ສປຈີນ (ແບບອອນລາຍ):</u>

1. ທ່ານ ຢາງຊຸນຢິງ ຜູ້ອຳນວຍການໃຫ່ຍຂອງບໍລິສັດການຮ່ວມມືເຕັກນິກເສດຖະກິດສາກົນ ຢຸນນານ ສປຈີນ ຈຳກັດ ປະທານສະພາບໍລິຫານຂອງບໍລິສັດ ຊີມັງລາວ ມະຫາຊົນ
2. ທ່ານ ອູຢາງຈີ້ຢົງ ຮອງຜູ້ອຳນວຍການໃຫ່ຍຂອງບໍລິສັດການຮ່ວມມືເຕັກນິກເສດຖະກິດສາກົນ ຢຸນນານ ສປຈີນ ຈຳກັດ ຮອງປະທານສະພາບໍລິຫານຂອງບໍລິສັດ ຊີມັງລາວ ມະຫາຊົນ
3. ທ່ານ ສຽວເຈ ກຳມະການສະພາບໍລິຫານ ອິດສະຫຼະຂອງບໍລິສັດ ຊີມັງລາວ ມະຫາຊົນ
4. ທ່ານ ຫຼີ ຊຸນໂປ ກຳມະການສະພາບໍລິຫານ ອິດສະຫຼະຂອງບໍລິສັດ ຊີມັງລາວ ມະຫາຊົນ

- <u>ຜູ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຢູ່ນະຄອນຫຼວງວຽງຈັນ ປະກອບມີ :</u>

1. ທ່ານ ວັນທອງ ສິດທິກຸນ ຜູ້ອຳນວຍການໃຫ່ຍ ລັດວິສາຫະກິດ ພກອ, ຮອງປະທານສະພາບໍລິຫານຂອງ ບໍລິສັດ LCC
2. ທ່ານ ຄຳບິນ ໄຊເລົ່າວົງ ຮອງຜູ້ອຳນວຍການໃຫ່ຍ ລັດວິສາຫະກິດ ພກອ, ກຳມະການສະພາບໍລິຫານຂອງ ບໍລິສັດ LCC
3. ທ່ານ ຈ່າງລີ້ ຜູ້ອຳນວຍການ ບໍລິສັດ LCC, ກຳມະການສະພາບໍລິຫານຂອງ LCC

4. ທ່ານ ທອງປົນ ກິ່ງຄຳເພັດ ຮອງຜູ້ອຳນວຍການ ບໍລິສັດ LCC, ກຳມະການສະພາບໍລິຫານຂອງ LCC
5. ທ່ານ ເຈ້ຍ ຢ້າວຊີ ຮອງຜູ້ອຳນວຍການ ບໍລິສັດ LCC, ກຳມະການສະພາບໍລິຫານຂອງ LCC
6. ທ່ານ ວິງວິຈິດ ແກ້ວວິງກິດ ກຳມະການສະພາບໍລິຫານ ອິດສະຫຼະ ຂອງບໍລິສັດ LCC
7. ທ່ານ ຫຼີຫຼີງ ຜູ້ອຳນວຍການໃຫ່ຍ ບໍລິສັດ ຫຼັກຊັບລາວ-ຈີນ ຈຳກັດ
8. ທ່ານ ນ ອັນນະພອນ ສຸນັນທາ ວິຊາການພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ,ສຄຄຊ ເປັນຫົວໜ້າ ຄະນະ
9. ທ່ານ ນ ອານຸວັນ ທຳມະວົງ ວິຊາການພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ,ສຄຄຊ ເປັນຄະນະ
10. ທ່ານ ເພັດດາລາ ຈັນສີແສງສະຫວັນ ວິຊາການພະແນກນິຕິກຳ,ສຄຄຊ ເປັນຄະນະ
11. ທ່ານ ເອກະໄຊ ມະນີວົງ ຫົວໜ້າຂະແໜງ, ພະແນກຈົດທະບຽນ ແລະເປີດເປີດຂໍ້ມູນ,ຕລຫຊ ເປັນຄະນະ
12. ທ່ານ ສິນທະນຸ ສົມຟອງບຸດຕະຂັນ ຕາງໜ້າຜູ້ຖືຮຸ້ນລາຍຍ່ອຍ

II. ສະເໜີກ່ຽວກັບລະບຽບ, ວິທີການລົງຄະແນນສຽງ ໃຫ້ທີ່ປະຊຸມຊາບ ຊຶ່ງມີລະອຽດດັ່ງລຸ່ມນີ້ :

1. ການລົງຄະແນນສຽງ :

1) ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
2) ໃນການລົງຄະແນນສຽງ,ຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້,ໃນນັ້ນ ຕ້ອງ ລະບຸຢ່າງຈະແຈ້ງກ່ຽວກັບ ຊື່ ແລະ ນາມສະກຸນຂອງທ່ານ,ຈຳນວນຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ ທີ່ທ່ານຖືຢູ່ ແລະ ໃຫ້ໝາຍຕີນກາໃສ່ຫ້ອງບໍ່ເຫັນດີ.
3) ກໍລະນີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ກາເຄື່ອງໝາຍໃສ່ຊ່ອງບໍ່ເຫັນດີໃນບັດລົງຄະແນນ ແລ້ວຍົກບັດນັ້ນຂຶ້ນ ເພື່ອໃຫ້ພະນັກງານນຳໄປກວດນັບຄະແນນສຽງໃນວາລະນັ້ນໆ ແລະສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກຂຶ້ນ ຈະຖືວ່າ ເຫັນດີຕາມທີ່ສະເໜີໃນກອງປະຊຸມ, ຍົກເວັ້ນກໍລະນີທີ່ຜູ້ຖືຮຸ້ນໄດ້ເຮັດເຄື່ອງໝາຍໃນໃບມອບສັນທະໄວ້ ຢ່າງຈະແຈ້ງແລ້ວ, ຊຶ່ງບໍລິສັດ ໄດ້ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.
4) ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນນັ້ນ ແມ່ນໃຫ້ຜູ້ຕາງໜ້າລົງຄະແນນສຽງ ຕາມຄວາມຕ້ອງການຂອງຜູ້ຖືຮຸ້ນທີ່ໄດ້ລະບຸໄວ້ໃນໃບມອບສັນທະນັ້ນ,

2. ການນັບ ແລະການແຈ້ງຜົນການລົງຄະແນນສຽງ

1) ທ່ານ ຈະໄດ້ຮັບແຈ້ງ ກ່ຽວກັບຜົນການ ນັບຄະແນນຢູ່ໃນທີ່ປະຊຸມເລີຍ,ໂດຍການນັບຄະແນນສຽງ ຈະຖື ເອົາໜຶ່ງຮຸ້ນເທົ່າກັບໜຶ່ງຄະແນນສຽງ.
2) ການລົງຄະແນນສຽງບໍ່ເຫັນດີ ຈະມີຜົນສັກສິດກໍ່ຕໍ່ເມື່ອມີຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນ ຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນທັງໝົດໃນທີ່ປະຊຸມ ດັ່ງທີ່ໄດ້ກຳນົດໃນມາດຕາ 143 ຂອງກົດໝາຍ ວ່າດ້ວຍລັດວິສະຫະກິດ.
3) ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າທີ່ມາເຂົ້າຮ່ວມກອງປະຊຸມ ແລະລົງ ຄະແນນສຽງໃນແຕ່ລະວາລະ.

4) ທ່ານ ສົມທະນູ ສົມພອງບຸດຕະຂັນ ຜູ້ຄວບຄຸມຄະແນນກອງປະຊຸມຈະປະກາດຜົນການລົງຄະແນນສຽງ ໃນແຕ່ລະວາລະໃຫ້ກອງປະຊຸມຮັບຊາບ ຫລັງຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນລົງ ໂດຍຈະແຍກຄະແນນເຫັນດີ ແລະບໍ່ເຫັນດີເປັນຈຳນວນສຽງ ແລະເປັນຈຳນວນຈັກສ່ວນຮ້ອຍ,
5) ສຳລັບຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ຫຼັງຈາກທີ່ຜູ້ຄວບຄຸມຄະແນນໄດ້ປະກາດຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມານັບເປັນຄະແນນສຽງຕື່ມອີກ.

ໂດຍອີງຕາມລະບຽບ ແລະກົດໝາຍທີ່ກ່ຽວຂ້ອງ ໃນກອງປະຊຸມຄັ້ງນີ້ແມ່ນບໍ່ອະນຸຍາດໃຫ້ຜູ້ສັງເກດການ ມີຄຳຖາມໃນເວລາດຳເນີນກອງປະຊຸມ, ມີພຽງແຕ່ຜູ້ຖືຮຸ້ນເທົ່ານັ້ນມີສິດຕັ້ງຄຳຖາມ ແລະປະກອບຄຳເຫັນກ່ຽວກັບວາລະກອງປະຊຸມ,

III. ສະເໜີວາລະຂອງການປະຊຸມ

ວາລະທີ 1 : ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຜ່ານມາ.

ວາລະທີ 2 : ພິຈາລະນາ ແລະຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018

ວາລະທີ 3 : ພິຈາລະນາ ແລະຮັບຮອງການປ່ຽນແປງອົງການຈັດຕັ້ງສະພາບໍລິຫານຂອງLCC

ວາລະທີ 4 : ພິຈາລະນາ ແລະຮັບຮອງ ບົດລາຍງານການດຳເນີນທຸລະກິດປະຈຳປີ 2019

ວາລະທີ 5 : ພິຈາລະນາ ແລະຮັບຮອງ ບົດລາຍງານວຽກງານການເງິນ ປະຈຳປີ 2019

ວາລະທີ 6 : ພິຈາລະນາ ແລະຮັບຮອງ ທິດທາງການປັນຜົນ ປະຈຳປີ 2019

ວາລະທີ 7 : ພິຈາລະນາ ແລະຮັບຮອງ ແຜນການດຳເນີນທຸລະກິດການຜະລິດ ປະຈຳປີ 2020

ເວລາຕໍ່ມາ,ທ່ານ ຈ່າງລີ ປະທານກອງປະຊຸມໄດ້ເລີ່ມເຂົ້າສູ່ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ໂດຍມອບໃຫ້ຜູ້ທີ່ກ່ຽວຂ້ອງລາຍງານເປັນແຕ່ລະວາລະ ຊຶ່ງມີລາຍລະອຽດ ດັ່ງລຸ່ມນີ້ :

ວາລະທີ 1 : ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຜ່ານມາ

ຮອງຜູ້ອຳນວຍການ ບໍລິສັດ (ທ່ານ ທອງປົນ ກິ່ງຄຳເພັດ) ໄດ້ລາຍງານມະຕິກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີຜ່ານມາໃຫ້ບັນດາຜູ້ຖືຮຸ້ນຮັບຊາບ, ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແຕ່ຜູ້ຖືຮຸ້ນບໍ່ມີການສອບຖາມ, ສ່ວນວາລະນີ້ບໍ່ໄດ້ມີການລົງຄະແນນສຽງ ລາຍງານໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ.

ວາລະທີ 2 : ພິຈາລະນາ ແລະຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018

ຮອງຜູ້ອຳນວຍການ ບໍລິສັດ (ທ່ານ ທອງປົນ ກິ່ງຄຳເພັດ) ໄດ້ລາຍງານບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ໃຫ້ບັນດາຜູ້ຖືຮຸ້ນຮັບຊາບ,ດັ່ງມີລາຍລະອຽດໃນ **ເອກະສານຄັດຕິດ 02,** ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນ, ເປີດເຜີຍໃນເວັບໄຊຂອງຕະຫຼາດຫຼັກຊັບ ແລະກອງປະຊຸມສະພາບໍລິຫານ ບຊລ ກໍໄດ້ຮັບຮອງຄວາມຖືກຕ້ອງແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ. ດັ່ງນັ້ນ,ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນ, ແຕ່ຜູ້ຖືຮຸ້ນທ່ານໃດປະກອບຄຳຄິດ.

ຜົນສະຫຼຸບການລົງຄະແນນສຽງວາລະນີ້ເຫັນດີຈຳນວນ 35,595,200 ສຽງເທົ່າກັບ 100%, ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3 : ພິຈາລະນາ ແລະຮັບຮອງ ການປ່ຽນແປງສະມາຊິກສະພາບໍລິຫານ LCC

ຜູ້ອຳນວຍການບໍລິສັດ (ທ່ານ ຈ່າງລີ) ໄດ້ລາຍງານການປ່ຽນແປງສະມາຊິກສະພາບໍລິຫານ LCC ເພື່ອໃຫ້ຜູ້ຖືຮຸ້ນຮັບຊາບດັ່ງມີລາຍລະອຽດໃນ **ເອກະສານຄັດຕິດ 03:** ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນ, ເປີດເຜີຍໃນເວັບໄຊຂອງຕະຫຼາດຫຼັກຊັບ ແລະກອງປະຊຸມສະພາບໍລິ ຫານ ບຊລ ກໍໄດ້ຮັບຮອງຄວາມຖືກຕ້ອງແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ. ດັ່ງນັ້ນ,ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນ, ທ່ານ ຫຼືຫຼິງ ໃນນາມຜູ້ຖືຮຸ້ນສະເໜີຕໍ່ກອງປະຊຸມວ່າ : ສະເໜີໃຫ້ບໍລິສັດເວລາຂຽນຊີ້ຈະປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານແມ່ນໃຫ້ອີງຕາມແບບຟອມທີ່ ສຄຄຊ ກຳນົດໄວ້.

ເຫັນຜົນສະຫຼຸບການລົງຄະແນນສຽງວາລະນີ້ ເຫັນດີໃນຈຳນວນ 35,595,200 ສຽງ ເທົ່າກັບ 100 ສ່ວນຮ້ອຍ, ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4 : ພິຈາລະນາ ແລະຮັບຮອງ ບົດລາຍງານການດຳເນີນທຸລະກິດປະຈຳປີ 2019

ຜູ້ອຳນວຍການບໍລິສັດ (ທ່ານ ຈ່າງລີ) ໄດ້ລາຍງານການດຳເນີນທຸລະກິດ ປະຈຳປີ 2019 ເພື່ອໃຫ້ຜູ້ຖືຮຸ້ນພິຈາລະນາແລະຮັບຮອງ ດັ່ງມີລາຍລະອຽດໃນ **ເອກະສານຄັດຕິດ 04:** ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນເປີດເຜີຍໃນເວັບໄຊຂອງຕະຫຼາດຫຼັກຊັບ ແລະກອງປະຊຸມສະພາບໍລິ ຫານ ບຊລ ກໍໄດ້ຮັບຮອງຄວາມຖືກຕ້ອງແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ. ດັ່ງນັ້ນ,ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນ,ທ່ານ ຫຼືຫຼິງ ໃນນາມຜູ້ຖືຮຸ້ນສະເໜີຕໍ່ກອງປະຊຸມວ່າ : ສະເໜີໃຫ້ບໍລິສັດອະທິບາຍສາເຫດທີ່ບໍລິສັດຈຳໜ່າຍຊີມັງໃຫ້ບາງໂຄງການໃນລາຄາຕ່ຳ,ທ່ານ ຈ່າງລີ ຜູ້ອຳນວຍການ ບໍລິສັດຕອບວ່າ : ການປະມູນແມ່ນໄດ້ຜ່ານການຕົກລົງເຫັນດີຢ່າງເປັນເອກະພາບຈາກບໍລິສັດ, ການປະມູນໃນຄັ້ງນີ້ແມ່ນຮູບແບບການປະມູນແບບທຳມະດາ, ລາຄາປະມູນຂອງພວກເຮົາບໍ່ແມ່ນລາຄາຕ່ຳສຸດ ຍັງມີບັນດາໂຮງງານອື່ນລາຄາການປະມູນຍັງຕ່ຳກວ່າໂຮງງານພວກເຮົາ ແຕ່ບໍລິສັດພວກເຮົາຍັງຖືກເລືອກຍ້ອນວ່າ : ບໍລິສັດເຮົາມີທ່າແຮງທາງດ້ານຄຸນນະພາບ, ຍີ່ຫໍ້, ບໍລິການ ແລະໄລຍະທາງໃນການຂົນສົ່ງ, ກ່ອນເຂົ້າຮ່ວມການປະມູນບໍ່ພຽງແຕ່ພິຈາລະນາເຖິງລາຄາການຂາຍຢ່າງດຽວ ຍັງຕ້ອງພິຈາລະນາເປົ້າໝາຍການຈຳໜ່າຍທີ່ສະພາບໍລິຫານຕັ້ງໄວ້ ແລະອັດຕາສ່ວນແລ່ນເຕົາຂອງໂຮງງານຫຼາຍໆປັດໃຈ ມີແຕ່ຮັບປະກັນປະລິມານການຈຳໜ່າຍ ຈຶ່ງສາມາດຮັບປະກັນໃຫ້ໂຮງງານພວກເຮົາມີການຜະລິດຢ່າງຕໍ່ເນື່ອງ, ສາມາດຫຼຸດຜ່ອນຕົ້ນທຶນການຜະລິດ ແລະຫຼີກລ້ຽງຜົນເສຍຫາຍຈາກການຢຸດເຕົາເຕັມຖ້ຽ, ຮອດປະຈຸບັນນີ້ລາຄາຊີມັງຂອງພວກເຮົາຢູ່ໃນຕະຫຼາດຊີມັງແມ່ນມີລາຄາສູງກວ່າໝູ່.

ຜົນສະຫຼຸບການລົງຄະແນນສຽງວາລະນີ້ ເຫັນດີໃນຈຳນວນ 28,047,400 ສຽງ ເທົ່າກັບ 79 ສ່ວນຮ້ອຍ,ບໍ່ເຫັນດີຈຳນວນ 7,547,800 ສຽງ ເທົ່າກັບ 21 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5 : ພິຈາລະນາ ແລະຮັບຮອງ ບົດລາຍງານການເງິນປີ 2019

ຫົວໜ້າພະແນກບັນຊີ-ການເງິນ (ທ່ານ ຈ່າງຢົງຟູ) ໄດ້ສະເໜີຕໍ່ທີ່ປະຊຸມ ພິຈາລະນາ ແລະຮັບຮອງ ກ່ຽວກັບ ບົດລາຍງານການເງິນປີ 2019 ດັ່ງມີລາຍລະອຽດໃນ **ເອກະສານຄັດຕິດ 05** ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນ, ໄດ້ເປີດເຜີຍໃນເວັບໄຊຂອງຕະຫຼາດຫຼັກຊັບ ແລະ ກອງປະຊຸມສະພາບໍລິຫານກໍໄດ້ຮັບຮອງຄວາມຖືກຕ້ອງ,ຄົບຖ້ວນແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ. ດັ່ງນັ້ນ,ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ, ທ່ານ ຫຼືຫຼິງ ໃນນາມຜູ້ຖືຮຸ້ນສະເໜີຕໍ່ກອງປະຊຸມວ່າ : ສະເໜີໃຫ້ບໍລິສັດອະທິບາຍສາເຫດທີ່ຄ່າຂົນສົ່ງເພີ່ມຂຶ້ນທຽບໃສ່ປີຜ່ານມາ, ທ່ານ ຈ່າງ ຢົງຟູ ຫົວໜ້າພະແນກບັນຊີ-ການເງິນ

ຕອບວ່າ : ສາເຫດທີ່ພາໃຫ້ຄ່າຂົນສົ່ງເພີ່ມຂຶ້ນແມ່ນຍ້ອນວ່າ : ລາຄານ້ຳມັນເພີ່ມຂຶ້ນແຕ່ວ່າຄ່າຂົນສົ່ງທຽບໃສ່ປີກາຍນີ້ ມີການເພີ່ມຂຶ້ນຈຳນວນບໍ່ຫລາຍປານໃດ ລາຍລະອຽດລະອຽດໃຫ້ກວດເບິ່ງເອກະສານລາຍງານການເງິນທີ່ບໍລິສັດ EY ກວດສອບແລ້ວ.

ຜົນສະຫຼຸບການລົງຄະແນນສຽງວາລະນີ້ ເຫັນດີໃນຈຳນວນ 35,595,200 ສຽງ ເທົ່າກັບ 100 ສ່ວນຮ້ອຍ, ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6 : ພິຈາລະນາ ແລະຮັບຮອງທິດທາງການປັນຜົນ ປີ 2019

ຫົວໜ້າພະແນກບັນຊີ-ການເງິນ (ທ່ານ ຈ່າງຢົງຟູ) ໄດ້ສະເໜີຕໍ່ທີ່ປະຊຸມ ພິຈາລະນາ ແລະຮັບຮອງ ກ່ຽວກັບທິດທາງການປັນຜົນປີ 2019 ດັ່ງມີລາຍລະອຽດໃນ **ເອກະສານຄັດຕິດ 06** ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນ ແລະໄດ້ເປີດເຜີຍໃນເວັບໄຊຂອງ ຕະຫຼາດຫຼັກຊັບແລ້ວ ແລະກອງປະຊຸມສະພາບໍລິຫານໄດ້ຮັບຮອງຄວາມຖືກຕ້ອງຄົບຖ້ວນແລ້ວ,ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມພິຈາລະນາຮັບຮອງ.

ດັ່ງນັ້ນ,ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ, ທ່ານ ຫຼີຫຼິງ ໃນນາມຜູ້ຖືຮຸ້ນ ສະເໜີຕໍ່ກອງປະຊຸມວ່າ : ຮຽກຮ້ອງໃຫ້ບໍລິສັດເອົາກຳໄລສະສົມຂອງແຕ່ລະປີຜ່ານມາ,ມາປັນຜົນໃຫ້ຜູ້ຖືຮຸ້ນ, ຖ້າບໍລິສັດບໍ່ມີເງິນສົດທີ່ສາມາດປັນຜົນໃຫ້ຜູ້ຖືຮຸ້ນໄດ້ ຂໍສະເໜີໃຫ້ບໍລິສັດປັນເປັນຮຸ້ນໃຫ້ແກ່ຜູ້ຖືຮຸ້ນຈະມີຄວາມເປັນໄປໄດ້ບໍ, ທ່ານ ຈ່າງລີ້ ຜູ້ອຳນວຍການ ບໍລິສັດຕອບວ່າ : ບໍລິສັດຂອງພວກເຮົາຈະອີງຕາມຄຳຄິດເຫັນຂອງ ຫຼາຍຂາຮຸ້ນ ແລະອີງໃສ່ກົດລະບຽບ, ກົດໝາຍທີ່ທາງຄະນະກຳມະການຄຸ້ມຄອງຫຼັກຊັບ ແລະຕະຫຼາດຫຼັກຊັບລາວອາງອອກ, ພາຍໃຕ້ເງື່ອນໄຂທີ່ສອດຄ່ອງກັບສະພາບເງື່ອນໄຂຕົວຈິງຂອງ ບໍລິສັດ, ບໍລິສັດຈະພິຈາລະນາເຖິງຄຳຄິດເຫັນທີ່ຜູ້ຖືຮຸ້ນສະເໜີມາ.

ຜົນສະຫຼຸບການລົງຄະແນນສຽງວາລະນີ້ ເຫັນດີໃນຈຳນວນ 28,047,400 ສຽງ ເທົ່າກັບ 79 ສ່ວນຮ້ອຍບໍ່ເຫັນດີຈຳນວນ 7,547,800 ສຽງ ເທົ່າກັບ 21 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 7 : ພິຈາລະນາ ແລະຮັບຮອງ ບົດລາຍງານແຜນການດຳເນີນທຸລະກິດຂອງ ບຊລ ປີ 2020

ຜູ້ອຳນວຍການ ບໍລິສັດ (ທ່ານ ຈ່າງລີ້) ໄດ້ສະເໜີຕໍ່ທີ່ປະຊຸມ ພິຈາລະນາ ແລະຮັບຮອງກ່ຽວກັບບົດລາຍງານແຜນການດຳເນີນທຸລະກິດຂອງ ບຊລ ປີ 2020 ດັ່ງມີລາຍລະອຽດໃນ **ເອກະສານຄັດຕິດ 07** ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນ, ໄດ້ເປີດເຜີຍໃນເວັບໄຊຂອງຕະຫຼາດຫຼັກຊັບ ແລະກອງປະຊຸມສະພາບໍລິຫານກໍໄດ້ຮັບຮອງຄວາມຖືກຕ້ອງ, ຄົບຖ້ວນແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມພິຈາລະນາ ແລະຮັບຮອງ. ດັ່ງນັ້ນ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ, ທ່ານ ຫຼີຫຼິງ ໃນນາມຜູ້ຖືຮຸ້ນສະເໜີຕໍ່ກອງປະຊຸມວ່າ : ເປົ້າໝາຍການຈຳໜ່າຍ ແລະກຳໄລ ຂອງບໍລິສັດ ໃນປີ 2020 ບໍລິສັດ ຈະກຳນົດເອົາໂຕໃດເປັນຫຼັກ ຫຼື ໂຕໃດສຳຄັນກວ່າ, ທ່ານ ຈ່າງລີ້ ຜູ້ອຳນວຍການ ບໍລິສັດ ຕອບວ່າ : ເປົ້າໝາຍທັງສອງລາຍການນີ້ແມ່ນມີຄວາມສຳຄັນເທົ່າກັນ ບໍລິສັດຕ້ອງໄດ້ເອົາໃຈໃສ່ ເພາະວ່າທັງຢ່າງນີ້ແມ່ນເປັນເປົ້າໝາຍຫຼັກ ແລະສຳຄັນທີ່ສຸດ ທີ່ຈະພາໃຫ້ບໍລິສັດ ສ້າງກຳໄລຢ່າງມະຫາສານ ແລະມີຄຸນຄ່າທີ່ສຸດ.

ຜົນສະຫຼຸບການລົງຄະແນນສຽງວາລະນີ້ ເຫັນດີໃນຈຳນວນ 35,595,200 ສຽງ ເທົ່າກັບ 100 ສ່ວນຮ້ອຍ, ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ຜ່ານການລາຍງານໃນກອງປະຊຸມສາມັນຜູ້ຖືຮຸ້ນມີທັງໝົດ 7 ວາລະ ແລະ 1 ວາລະ ບໍ່ໄດ້ມີການລົງຄະແນນສຽງ ແມ່ນຜ່ານໄປດ້ວຍຜົນສຳເລັດອັນຈົບງາມ.

ຈາກນັ້ນ, ປະທານກອງປະຊຸມໄດ້ກ່າວອວຍພອນໄຊບັນດາທ່ານຄະນະປະທານ, ຜູ້ຖືຮຸ້ນ, ກຳມະການສະພາບໍລິຫານ ແລະແຂກທີ່ມີກຽດທຸກທ່ານ ພ້ອມກ່າວປິດກອງປະຊຸມໃນເວລາ 16:00 ໂມງ ຂອງວັນດຽວກັນ,

ປະທານກອງປະຊຸມ

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ຈ່າງ ລີ

ຜູ້ບັນທຶກ

ຈ້າວ ປິ່ງປິ່ນ

ໝາຍເຫດ : ບົດບັນທຶກສະບັບນີ້ໃຫ້ຖືເອົາສະບັບພາສາລາວເປັນຫຼັກ